**<u>ແຜນການສອນ</u>**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 09 ພຶສພາ 2010 (05-09-2010)**

---

## <u>ຂ້ອຍຮັບເອົາເຈົ້າ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (ປະຖົມມະການ 2:23-25; ມາລາກີ 2:13-15; ມັດທາຍ 19:3-12)

### <u>ເປົ້າໝາຍຂອງບົດຮຽນ:</u>

ບົດຮຽນນີ້ແມ່ນກ່ຽວກັບການເຂົ້າໃຈຈຸດປະສົງຂອງພຣະເຈົ້າ ສຳລັບການແຕ່ງງານ ທີ່ເປັນການຕັດສິນໃຈອັນຍາວນານຂອງຊີວິດ.

### <u>ຄວາມສຳຄັນຂອງບົດຮຽນ:</u>

ຈາກການຄົ້ນຄ້ວາ ເມື່ອບໍ່ນານມານີ້ ໃນຖ້າມກາງພວກທີ່ເຖິງກະສຽນແລ້ວ ທີ່ໄດ້ແຕ່ງງານຢ່າງເປີດເຜີຍ ຊຶ່ງສະແດງໃຫ້ເຫັນວ່ານຶ່ງໃນສາມຄູ່ຈະປະສົບກັບການຢ່າຮ້າງກັນ, ແລະພວກທີ່ບັງເກີດໃໝ່ເປັນຄຣິສຕຽນແລ້ວກໍມີການຢ່າຮ້າງກັນ ຄືກັບພວກທີ່ບໍ່ເປັນຄຣິສຕຽນ. ຊຶ່ງມີຫລັກຖານທີ່ຊີ້ໃຫ້ເຫັນວ່າພວກເຖິງກະສຽນລຸ້ນໜຸ່ມກວ່າຍັງມີແນວຄິດທີ່ຊອບໃນການແຕ່ງງານຫລາຍເທື່ອ (ຫລື ແຕ່ງກັບຫລາຍຄົນ) , ຄື: ແຕ່ງງານສອງຫລືສາມເທື່ອ, ການຊອກຫາຄູ່ຄອງໃໝ່ໃນແຕ່ລະຂັ້ນຕອນການປ່ຽນແປງຂອງຊີວິດ ໃນໄວກະສຽນຂອງພວກເຂົາ. ພຣະຄັມພີສອນວ່າການແຕ່ງງານແມ່ນການຕັດສິນໃຈອັນຍາວນານລະຫວ່າງຊາຍນຶ່ງແລະຍິງນຶ່ງຈະຕ້ອງຢູ່ດ້ວຍກັນໄປຕລອດຊີວິດ.

### <u>ຜົນສະທ້ອນຕໍ່ຊີວິດ:</u>

ບົດຮຽນນີ້ຈະເພີ້ມການຕັດສິນໃຈຂອງທ່ານ ໃຫ້ເຮັດຕາມການແຕງງານຕາມຫລັກພຣະຄັມພີ ເພື່ອໃຫ້ເປັນການສັນຍາອັນຍາວນານຂງຊີວິດ.

### <u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

### <u>ແນະນຳ:</u>

- ໃຫ້ນັກຮຽນຂຽນເຣື່ອງການສາບານຕາມຮີດຄອງປະເພນີ ທີ່ໃຫ້ຊຶ່ງກັນແລະກັນ.
- ເປັນຫຍັງຈຶ່ງຍັງມີຫລາຍຄົນບໍ່ເຮັດຕາມຄຳສາບານຕໍ່ກັນໃນເວລາທີ່ເຂົາເຈົ້າແຕ່ງງານນັ້ນ?

## 1. <u>ເມື່ອ 1+1=1:</u> (ປະຖົມມະການ 2:23-25)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປະຖົມມະການ 2:23-25
- ອີງຕາມຂໍ້ພຣະຄັມພີນີ້ບອກເອົາໄວ້ວ່າ, ໃນເມື່ອຜູ້ຊາຍແລະຜູ້ຍິງອອກຈາກພໍ່ແມ່ໄປ ເຂົາທັງສອງກໍກາຍເປັນອັນນຶ່ງອັນດຽວກັນ, ເຂົາບໍ່ພຽງແຕ່ເປັນອັນນຶ່ງອັນດຽວກັນທາງຝ່າຍເນື້ອໜັງ, ແຕ່ກໍເປັນຄົນຄົນດຽວກັນ, ມີການທຳງານຮ່ວມກັນ, ໃຫ້ກຽດແລະເສີມສ້າງຊຶ່ງກັນແລະກັນ.
- ຂໍ້ທີ 24 ຊຶ່ງສະແດງອອກໃຫ້ເຫັນວ່າມີຂໍ້ຕົກລົງກັນສາມສິ່ງດ້ວຍກັນໃນການແຕ່ງງານຄື: (1) ຜູ້ຊາຍຕ້ອງລະບິດາມານດາ, (2) ໄປຕິດພັນຢູ່ກັບເມັຽ, ແລະ (3) ເຂົາທັງສອງກໍກາຍເປັນຄົນຄົນດຽວກັນ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ປະຖົມມະການ 2:23-25)

1. ແມ່ນຫຍັງທີ່ກາຍມາເປັນອັນນຶ່ງອັນດຽວກັນ ມີຫຍັງບໍ່ທີ່ກ່ຽວພັນກັບຄວາມສັມພັນໃນການແຕ່ງງານ?
2. ການທີ່ກາຍມາເປັນອັນນຶ່ງອັນດຽວກັນນີ້ ເຮັດໃຫ້ຄວາມສັມພັນໃນການແຕ່ງງານໝັ້ນຄົງດີບໍ່?
3. ເປັນຫຍັງຈຶ່ງວ່າເປັນຄວາມສຳຄັນຕໍ່ຄວາມສັມພັນໃນການແຕ່ງງານທີ່ມີພຣະເຈົ້າເປັນສູນກາງ?
4. ຜົວແລະເມັຽທັງສອງໄດ້ສັນຍາຕໍ່ກັນຕໍ່ພຣະພັກພຣະເຈົ້າໃນເວລາແຕ່ງງານກັນຄືແນວໃດ?

## 2. <u>ຄຳໝັ້ນສັນຍາທີ່ເປັນການຕິດຕໍ່ພົວພັນ:</u> (ມາລາກີ 2:13-15)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາລາກີ 2:13-15
- ພວກເຮົາຢູ່ໃນມາລາກີ, ພັນປີຫລັງຈາກປະຖົມມະການຂໍ້ທີ 2. ຄົນທັງຫລາຍໄດ້ລືມການແຕ່ງງານຕາມທີ່ພຣະເຈົ້າໄດ້ຊົງແຕ່ງຕັ້ງໄວ້, ເຂົາໄດ້ເອົາການບໍ່ໃຫ້ກຽດເມັຽເຂົ້າມາແທນ, ມາລາກີໄດ້ບອກວ່າພຣະເຈົ້າບໍ່ພໍພຣະທັຍກັບການກະທຳຂອງເຂົາ.
- 1 ເປໂຕບົດທີ 3:7 ໄດ້ເວົ້າວ່າ ສາມີຄວນຢູ່ກິນກັບພັລຍາຂອງຕົນ ດ້ວຍເຂົ້າໃຈວ່ານາງເປັນເພດອ່ອນແອຈຶ່ງນັບຖືໃຫ້ກຽດລາວ ເພື່ອບໍ່ໃຫ້ເປັນການຂັດຂວາງຕໍ່ການອ້ອນວອນ.
- ມີແຕ່ໃຫ້ຜົວທີ່ນັ້ນບໍ່ທີ່ຮັກແລະໃຫ້ກຽດເມັຽເປັນຢ່າງດີ?
- ຄົນໜຸ່ມສ່ວນຫລາຍຢ່າໄດ້ແຕ່ງງານໂດຍທີ່ບໍ່ໄດ້ຕັດສິນໃຈຢ່າງຄັກແນ່; ເຂົາເຈົ້າບໍ່ໄດ້ອຸທິດຕົນໃຫ້ຢູ່ໂດດດ່ຽວ ອີງຕາມທີ່ພຣະເຈົ້າຊົງໄດ້ແຕ່ງຕັ້ງ(ວາງແຜນການ) ໃຫ້ເຂົາຕ້ອງແຕ່ງງານກັນຢ່າງເປັນການຖືກຕ້ອງ. ໃນເມື່ອພິຈາຣະນາເບິ່ງແລ້ວ ເວລາຊີວິດຫລັງຈາກການແຕ່ງງານໄດ້ພົບກັບຄວາມລຳບາກ ສັນຍາໃນການແຕ່ງງານໄດ້ຖືກລືມໄປໄດ້ຢ່າງງ່າຍດາຍ. ແລ້ວກໍເກີດມີການຢ່າຮ້າງຂຶ້ນມາ ເພາະວ່າບໍ່ໄດ້ຊ່ອຍກັນແກ້ໄຂບັນຫານັ້ນໆ.
- ໃຫ້ນັກຮຽນອະທິບາຍຄຳວ່າ "ຂໍ້ສັນຍາ" ນັ້ນຄືແນວໃດ. ຄຳວ່າ ຂໍ້ສັນຍານັ້ນໄດ້ໃຫ້ມີການເຂົ້າໃຈຢ່າງແຈ່ມແຈ້ງເຖິງຄວາມໝາຍອັນແທ້ຈິງ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ມາລາກີ 2:13-15)

1. ການໂຄຣົບຄຳສາບານຂອງພວກເຮົາ ແລະໃຫ້ກຽດແກ່ຄູ່ສົມຣົດຂອງພວກເຮົາມີຜົນຕໍ່ຄວາມສັມພັນກັບພຣະເຈົ້າແນວໃດແດ່?
2. ເປັນດ້ວຍເຫດໃດສັງຄົມຂອງພວກເຮົາຈຶ່ງເຮັດໃຫ້ການແຕ່ງງານກັບກາຍມາມີຄຸນຄ່ານ້ອຍລົງ?
3. ພວກເຮົາຜູ້ຢູ່ໃນໂບດຮູ້ສຶກມີຄວາມເສັຽໃຈຕໍ່ເຫດການນີ້ຢ່າງໃດ?

4. ໃນໂບດຂອງພວກເຮົາ ເຮົາຄວນໃຫ້ການສຶກສາ ແກ່ຄົນໜຸ່ມແນວໃດ ກ່ອນທີ່ເຂົາຈະແຕ່ງງານ?
5. ຄວາມສຳຄັນຂອງເຣື່ອງການສັນຍາ (ຂໍ້ຜູກມັດ) ທີ່ເຂົາເຈົ້າໄດ້ເຮັດຕໍ່ກັນຕລອດເຖິງຄຳສາບານໃນເວລາແຕ່ງງານກັນນັ້ນຕ້ອງໃຫ້ເຂົາເຈົ້າໄດ້ເຂົ້າໃຈກ່ອນໄດ້ແນວໃດ?

3 . <u>**ການຕັດສິນໃຈເດັດດ່ຽວຊົ່ວຊີວິດ:**</u> (ມັດທາຍ 19:3-12)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມມັດທາຍ 19:3-12
- ພຣະເຈົ້າໄດ້ຊົງອອກແບບການແຕ່ງງານໃຫ້ເປັນຄຳໝັ້ນສັນຍາອັນຍາວນານໄປຕລອດຊົ່ວຊີວິດ.
- ພຣະເຢຊູໄດ້ຊົງຮັບຮູ້ທີ່ບາງຄົນຖືກເອີ້ນໃຫ້ເປັນໂສດ. ພຣະອົງໄດ້ເອີ່ຍເຖິງຄົນທີທີ່ເປັນແບບຢ່າງຂອງການເປັນໂສດໃນສມັຍນັ້ນ.
- ພຣະເຢຊູໄດ້ຊົງກ່າວວ່າ ການສເລີມສລອງໃນເວລາແຕ່ງງານນັ້ນເປັນການດີຢູ່ແລ້ວ ຊຶ່ງເປັນການໃຫ້ກຽດ
- ພຣະເຈົ້າທີ່ຊົງປະທານໃຫ້ມີຄູ່ຊີວິດຢ່າງເໝາະສົມ.
- ຂໍໃຫ້ນັກຮຽນບອກເຫດຜົນທີ່ຄູ່ສົມຣົດຢູ່ຮ່ວມກັນມາ 5 ຢ່າງ. ຖ້າເປັນໄປໄດ້ໃຫ້ນຳພານັກຮຽນເບິ່ງ ວີດີໂອ Movie Fireproof. ຈະເປັນການດີທີ່ສຸດ. ໜັງເຣື່ອງນີ້ ເລົ່າເຣື່ອງຂອງກາເລັບແລະເຄເທີຣີນ ກັບການແຕ່ງງານທີ່ເປັນສິ່ງນ້ອຍໆຢູ່ອ້ອມຮອບຕົວຂອງເຂົາເຈົ້າ. ຜ່ານທາງການຈູງໃຈຈາກພໍ່ຂອງລາວແລະຄວາມຮັກຂອງກາເລັບຈຶ່ງໄດ້ຮັກສາຊີວິດການແຕ່ງງານຂອງເຂົາເຈົ້າໄວ້ໄດ້.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ມັດທາຍ 19:3-12

1. ຄວາມສັມພັນຂອງທ່ານກັບພຣະເຢຊູຄຣິດເປັນແນວໃດ? ຢ່າງໃດກໍຕາມ ມັນມີຄວາມກ່ຽວພັນຂັດຂວາງຕໍ່ຊີວິດການແຕ່ງງານຂອງທ່ານຫລືບໍ່?
2. ຄຳສາບານໃນມື້ທີ່ທ່ານແຕ່ງງານໄດ້ເຂົ້າມາສູ່ສມອງຄວາມຄິດທ່ານຈັກເທື່ອແລ້ວ?
3. ມີທາງໃດແດ່ທີ່ທ່ານສາມາດປ້ອງກັນຊີວິດການແຕ່ງງານຂອງທ່ານຈາກການເຮັດໃຫ້ແຕກແຍກກັນ?
4. ເປັນຫຍັງຈຶ່ງວ່າຄວາມສັມພັນການແຕ່ງງານຂອງພວກເຮົາໄດ້ມີບົດບາດອັນສຳຄັນຫລາຍຂຶ້ນຫລັງຈາກພວກເຮົາມີຄວາມສັມພັນກັບພຣະຄຣິດ?

<u>**ພຣະຄັມພີແຫ່ງຄວາມຈິງ**</u>

- ຫລັງຈາກການສ້າງອາດາມ ແລະເອວາ, ພຣະເຈົ້າມີເຈຕນາໃຫ້ຜູ້ຊາຍແຕ່ງງານກັບຜູ້ຍິງ ແລະໃຫ້ທັງສອງກາຍມາເປັນອັນນຶ່ງອັນດຽວກັນ.
- ຊຶ່ງບໍ່ສຳຄັນວ່າມີຄົນຫລາຍເທົ່າໃດທີ່ລົດຄຸນຄ່າການແຕ່ງງານ, ພຣະເຈົ້າຍັງໃຫ້ກຽດຢູ່ທີ່ການຢູ່ກິນດ້ວຍກັນໄປຈົນຊົ່ວຊີວິດຂອງພັລຍາສາມີ.
- ພຣະເຢຊູຄຣິດໄດ້ຊົງສຳແດງແຜນການຂອງພຣະເຈົ້າໃຫ້ພວກເຮົາແຕ່ງງານກັນ ຢູ່ດ້ວຍກັນຢ່າງໝັ້ນຄົງຖາວອນ ຄວາມສັມພັນລະຫວ່າງສາມີກັບພັລຍາຂອງລາວ ໂດຍບໍ່ໃຫ້ຜູ້ນຶ່ງຜູ້ໃດນຳຈຸດຈົບມາໃສ່ເຂົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**